Media Release

Cambodia • Lao PDR • Thailand • Viet Nam
For sustainable development

*ເພື່ອການເຜີຍແຜ່*

# ຄຳເຫັນແນະນຳ ແລະ ຂໍ້ສະເໜີຫຼັກ ເພື່ອຄຸ້ມຄອງຄວາມສ່ຽງ ຂອງ ໂຄງການ ປາກລາຍ ໄດ້ຮັບການປຶກສາຫາລື

**ນະຄອນຫຼວງວຽງຈັນ, ສປປ ລາວ, 22 ກຸມພາ 2019** – ບົດສັງລວມຄຳເຫັນແນະນຳ ແລະ ຂໍ້ສະເໜີ ເພື່ອ ຫລຸດຜ່ອນ ຜົນກະທົບ ແລະ ມາດຕະການໃນການຄຸ້ມຄອງຄວາມສ່ຽງ ຂອງ ໂຄງການ ແລະ ຮ່າງບົດລາຍງານທົບທວນທາງດ້ານວິຊາການ ສະບັບປັບປຸງສຸດທ້າຍ ຂອງ ໂຄງການ ເຂື່ອນໄຟຟ້າພະລັງງານນ້ຳປາກລາຍ ຂອງ ສປປ ລາວ ແມ່ນ ບາງປະເດັນທີ່ໄດ້ນຳມາປຶກສາຫາລືກັນໃນ ກອງປະຊຸມຄະນະສະເພາະກິດຂອງ ຄະນະກຳມະການຮ່ວມ ຂອງ ຄມສ ສຳລັບ ລະບຽບອ່າດ້ວຍ ການແຈ້ງໃຫ້ຊາບ, ການປຶກສາຫາລືກັນກ່ອນ ແລະ ການຕົກລົງ ກັນ ທີ່ໄດ້ຈັດກອງປະຊຸມຄັ້ງນີ້ເປັນຄັ້ງທີສາມ ທັງເປັນກອງປະຊຸມຄັ້ງສຸດທ້າຍ ທີ່ ນະຄອນຫຼວງວຽງຈັນ.

ບົດສັງລວມຄຳເຫັນແນະນຳ ແລະ ຂໍ້ສະເໜີກ່ຽວກັບ ມາດຕະການໃນການຄຸ້ມຄອງຄວາມສ່ຽງຂອງໂຄງການ ພ້ອມທັງ ຮ່າງບົດລາຍງານທົບທວນທາງດ້ານວິຊາການ ແມ່ນ ເອກະສານທີ່ສຳຄັນທີ່ ຄະນະສະເພາະກິດ ໄດ້ກະກຽມ ເພື່ອ ນຳສະເໜີຕໍ່ ຄະນະກຳມະການຮ່ວມ (ເຊິ່ງເປັນ ການຈັດຕັ້ງປະຕິບັດນະໂຍບາຍ ຂອງ ຄມສ) ໃຫ້ພິຈາລະນາ ໃນຕອນທ້າຍຂອງ ຂະບວນການປຶກສາຫາລືກັນກ່ອນ ທີ່ມີກຳນົດເວລາຫົກເດືອນ.

"ຄະນະສະເພາະກິດ ຕ້ອງຮັບປະກັນວ່າ ບັນດາຂໍ້ສະເໜີ ຈາກ ປະເທດສະມາຊິກ ແລະ ພາກສວນກ່ຽວຂ້ອງ ໄດ້ຖືກນຳສະເໜີຢ່າງທ່ຽງທຳ ແລະ ບົດລາຍງານທົບທວນດ້ານເຕັກນິກນັ້ນແມ່ນ ມີລັກສະນະໜັກແໜ້ນ ແລະ ມີລັກສະນະວິທະຍາສາດ" ທ່ານ ປອ. ເລີ ດຸກ ຈຸງ, ປະທານ ຄະນະສະເພາະກິດ ຂອງ ຄະນະກຳມະການຮ່ວມ ໄດ້ກ່າວ ໃນການເປີດກອງປະຊຸມ.

ບົດສັງລວມຄຳເຫັນແນະນຳ ແລະ ຂໍ້ສະເໜີແມ່ນ ໄດ້ກວມເອົາທຸກມິຕິ ຂອງ ຂະບວນການທົບທວນທາງດ້ານວິຊາການ ເຊິ່ງ ລວມມີສີ່ຂົງເຂດ ຄື: ຂໍ້ສະເໜີກ່ຽວກັບ ຂະບວນການທາງດ້ານວິຊາການ, ການນຳໃຊ້ຂໍ້ມູນ ແລະ ຂ່າວສານ, ໂຄງສ້າງພື້ນຖານ ແລະ ຜົນກະທົບຂ້າມ ຊາຍແດນທີ່ອາດຈະເກີດຂຶ້ນ.

ຕົວຢ່າງ: ຄຳເຫັນທາງຂະບວນການວິຊາການໄດ້ ສະເໜີໃຫ້ ມີການເບິ່ງຄວາມສອດຄ່ອງຕາມ ບົດແນະນຳການອອກແບບເບື້ອງຕົ້ນເຂື່ອນ ຕາມ ລຳນ້ຳຂອງ ໃນອ່າງແມ່ນ້ຳຂອງຕອນລຸ່ມ ທີ່ສ້າງຂຶ້ນໃນປີ 2009 ແລະ/ຫຼື ບົດແນະນຳໃນລະດັບພາກພື້ນ ແລະ ສາກົນອື່ນໆ ກ່ຽວກັບ ການອອກແບບ ແລະ ການປະເມີນຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ ເພື່ອ ຈຳກັດ ຄວາມສ່ຽງທີ່ອາດຈະເກີດຂຶ້ນ.

ນອກຈາກນັ້ນ, ຄຳເຫັນກ່ຽວກັບ ຜົນກະທົບ ຂ້າມຊາຍແດນ ທີ່ອາດຈະເກີດຂຶ້ນ ແມ່ນ ສອດຄ່ອງກັບຄວາມມຸ່ງໝັ້ນພາຍໃຕ້ ສັນຍາແມ່ນ້ຳຂອງ ປີ 1995 ແລະ ໄດ້ມີການສະເໜີໃຫ້ ສປປ ລາວ ເອົາໃຈໃສ່ຈັດຕັ້ງປະຕິບັດ ບັນດາມາດຕະການທີ່ກ່ຽວຂ້ອງ ຢ່າງສູງສຸດ.

“ບັນດາຄຳເຫັນແນະນຳ ແລະ ຂໍ້ສະເໜີ ເຫຼົ່ານີ້ ປະກອບສ່ວນຕໍ່ ຄວາມມຸ່ງໝັ້ນ ແລະ ຄວາມພະຍາຍາມໃນການ ປະຕິບັດ ພັນທະ ເພື່ອຫຼີກລ່ຽງ, ຫລຸດຜ່ອນ ແລະ ບັນເທົາ ຜົນກະທົບ ທີ່ອາດຈະເກີດຂຶ້ນ ຕາມທີ່ ກຳນົດໃນສັນຍາ ແມ່ນ້ຳຂອງ ປີ 1995 ພ້ອມທັງໄດ້ ພິຈາລະນາ ຢ່າງລະອຽດ ຄຳເຫັນແນະນຳ ຈາກພາກສ່ວນກ່ຽວຂ້ອງ” ທ່ານ ອານ ປິກ ຫັດດາ ຫົວໜ້າກອງເລຂາ ຄມສ ກ່າວ ໃນກອງປະຊຸມ. “ຄຳເຫັນແນະນຳ ແລະ ຂໍ້ສະເໜີດັ່ງກ່າວ ຍັງມີວັດຖຸ ປະສົງ ສືບຕໍ່ຜັນຂະຫຍາຍການຮ່ວມມື ແລະ ຄວາມເຊື່ອມໝັ້ນ ທີ່ມີ ໃນປັດຈຸບັນ ລະຫວ່າງປະເທດສະມາຊິກ.”

ກອງປະຊຸມຍັງໄດ້ ສົນທະນາ ບົດລາຍງານ ຂອງ ກອງປະຊຸມພາກສ່ວນທີ່ກ່ຽວຂ້ອງລະດັບພາກພື້ນ ຄັ້ງທີໜຶ່ງ ແລະ ຄັ້ງທີສອງ ເຊິ່ງ ລວມມີ ຄຳເຫັນແນະນຳຈາກພາກສ່ວນກ່ຽວຂ້ອງ ເພື່ອ ປັບປຸງ ໂຄງການ ທີ່ຖືກສະເໜີ. ນອກຈາກ ນັ້ນ ກໍຍັງມີຄຳເຫັນແນະນຳໃນບົດລາຍງານ ທີ່ໄດ້ຈາກ ຜົນກອງປະຊຸມ ລະດັບຊາດ ໃນ ບັນດາປະເທດ ສະມາຊິກນຳອີກ.

ກອງປະຊຸມ ໄດ້ຕົກລົງເຫັນດີໃຫ້ຈັດວາລະກອງປະຊຸມພິເສດ ຂອງ ຄະນະກຳມະການຮ່ວມ ໃນທ້າຍເດືອນມີນາ ຫຼື ຕົ້ນເດືອນ ເມສາ ປີ 2019 ທີ່ນະຄອນຫຼວງວຽງຈັນ. ວາລະກອງປະຊຸມດັ່ງກ່າວ ຈະເປັນ ຂັ້ນຕອນສຸດທ້າຍ ຂອງ ຂະບວນການປຶກສາຫາລືກັນກ່ອນ ຊຶ່ງກຳນົດເວລາສຳເລັດ ພາຍໃນໄລຍະຫົກເດືອນ. ໃນກອງປະຊຸມດັ່ງກ່າວ ຄາດ ວ່າ ຄະນະກຳມະການຮ່ວມຈະຕ້ອງອອກ ຖະແຫຼງການຮ່ວມກັນ ເພື່ອ ວາງພື້ນຖານໃນການສ້າງ ແຜນດຳເນີນງານ ຮ່ວມກັນ ກ່ຽວກັບ ໂຄງການ ເຂື່ອນໄຟຟ້າ ພະລັງງານນ້ຳປາກລາຍ ທີ່ມີກຳລັງການຜະລິດ 770 ເມກາວັດ.

ໃນວັນທີ 13 ມິຖຸນາ 2018, ລັດຖະບານ ສປປ ລາວ ໄດ້ແຈ້ງກອງເລຂາ ຄມສ ກ່ຽວກັບ ຄວາມຕັ້ງໃຈຂອງຕົນເຂົ້າ ຮ່ວມຢ່າງເປັນທາງການ ໃນຂະບວນການປຶກສາຫາລືກັນກ່ອນຂອງ ໂຄງການປາກລາຍ, ເຂື່ອນທີສີ່ທີ່ຕັ້ງໃນລຳ ແມ່ນ້ຳຂອງ ທີ່ໄດ້ ຖືກສະເໜີດຳເນີນຂະບວນການດັ່ງກ່າວ.

ໂຄງການປາກລາຍ ແມ່ນເຂື່ອນແບບນ້ຳໄຫຼຜ່ານ, ຕັ້ງຢູ່ເມືອງປາກລາຍ ແຂວງໄຊຍະບູລີ ໃນ ພາກຕາເວັນຕົກສ່ຽງ ເໜືອ ຂອງ ສປປ ລາວ ເຊິ່ງ ຢູ່ທາງຕອນໃຕ້ ຂອງ ເຂື່ອນໄຊຍະບູລີ ແລະ ຢູ່ທາງພາກເໜືອ ຂອງ ນະຄອນຫລວງ ວຽງຈັນ 241 ກິໂລແມດ. ເຂື່ອນດັ່ງກ່າວ ຈະດຳເນີນການຜະລິດ 4.124 ກິກະວັດໂມງຕໍ່ປີ ແນໃສ່ສະໜອງໄຟຟ້າ ພາຍໃນປະເທດ.

ໂຄງການມີມູນຄ່າການລົງທຶນທັງໝົດ 2.134 ລ້ານໂດລາສະຫະລັດ ເຊິ່ງຄາດວ່າຈະເລີ່ມຕົ້ນກໍ່ສ້າງ ໃນປີ 2022 ແລະ ເລີ່ມ ຜະລິດເພື່ອການຄ້າ ຫຼັງຈາກ ການກໍ່ສ້າງສຳເລັດລົງ ໃນປີ 2029. ບໍລິສັດ ພາວເວີໄຊນາຣີສອດ ຈຳກັດ (Power China Resources Ltd) ແລະ ກຸ່ມບໍລິສັດ ນຳເຂົ້າ-ສົ່ງອອກ ເຄື່ອງອີເລັກໂຕນິກ ແຫ່ງຊາດ ສປ ຈີນ (China National Electronics Import-Export Corporation) ເປັນຜູ້ພັດທະນາໂຄງການ, ອີງຕາມ ເອ ກະສານ ການແຈ້ງໃຫ້ຊາບຢ່າງເປັນທາງການ ຂອງ ສປປ ລາວ.

**ໝາຍເຫດ:**

ຄມສ ແມ່ນ ອົງການຈັດຕັ້ງ ລະຫວ່າງລັດຖະບານ ເພື່ອການປຶກສາຫາລື ແລະ ການຮ່ວມມື ໃນອ່າງແມ່ນ້ຳຂອງ ຕອນ ລຸ່ມ, ສ້າງຕັ້ງຂຶ້ນໃນປີ 1995 ອີງຕາມສັນຍາແມ່ນ້ຳຂອງ ລະຫວ່າງ ຣາຊະອານາຈັກກຳປູເຈຍ, ສປປ ລາວ, ຣາຊະ

ອານາຈັກໄທ ແລະ ສສ ຫວຽດນາມ. ອົງການດັ່ງກ່າວເປັນກົນໄກລະດັບພາກພື້ນ ເພື່ອ ການຮ່ວມມື ກ່ຽວກັບນ້ຳ ແລະ ທັງເປັນ ສູນກາງຄວາມຮູ້ ການຄຸ້ມຄອງຊັບພະຍາກອນນ້ຳເພື່ອການພັດທະນາ ທີ່ຍືນຍົງ ຂອງ ພາກພື້ນ.

- ຈົບ -

ຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່ :
ທ່ານ ໂສພິກ ແມສ໌
ເຈົ້າໜ້າທີ່ ການຂ່າວສືສານ
ຫ້ອງການຫົວໜ້າກອງເລຂາ ຄມສ
ກອງເລຂາ ຄະນະກຳມາທິການແມ່ນ້ຳຂອງສາກົນ
ນະຄອນຫຼວງວຽງຈັນ 01000, ສປປ ລາວ
ອີເມວ: sopheak@mrcmekong.org
ໂທລະສັບ : +856-21-263263, ຕໍ່ 4072
ໂທລະສັບມືຖື: (856)-2077779168

###